**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກສຶກສາທິການ ແລະ ກິລາ

ເລກທີ 919 /ກສນວ

ວັນທີ 11 ເມສາ 2024

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບຄົ້ນຄ້ວາ ແລະ ກະກຽມສະເຫຼີມສະຫຼອງ ວັນຄູແຫ່ງຊາດ ຄົບຮອບ 30 ປີ (ວັນທີ 7 ຕຸລາ 1994 ຫາ 7 ຕຸລາ 2024)

- ອີງຕາມ ດຳລັດ ວ່າດ້ວຍການແຂ່ງຂັນ ແລະ ຍ້ອງຍໍ ສະບັບເລກທີ 116/ລບ, ລົງວັນທີ 22/04/2019;
- ອີງຕາມ ຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ເລກທີ 145/ຈນວ, ລົງວັນທີ 03 ກຸມພາ 2023;
- ອີງຕາມການຄົ້ນຄ້ວາ ແລະ ເຫັນດີຂອງຄະນະພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນໃນ ຄັ້ງວັນທີ 18/3/2024 ກ່ຽວກັບການກະກຽມເພື່ອສະເຫຼີມສະຫຼອງວັນຄູແຫ່ງຊາດ 7 ຕຸລາ ຄົບຮອບ 30 ປີ (7 ຕຸລາ 1994 ຫາ 7 ຕຸລາ 2024);
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີຂອງຂະແໜງຈັດຕັ້ງ ແລະ ພະນັກງານ ຄັ້ງວັນທີ 11/4/2024.

### ຫົວໜ້າພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ, ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ

1. ທ່ານ ສົມພອນ ສອນດາລາ — ຫົວໜ້າພະແນກສຶກສາທິການ ແລະ ກິລາ — ເປັນຫົວໜ້າ
2. ທ່ານ ບຸນທັນ ແສງມະນີ — ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ — ເປັນຮອງ
3. ທ່ານ ນ. ລີປ່າເອ້ຍ ບົວປາວ — ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ — ເປັນຄະນະ
4. ທ່ານ ສີທົນ ດາວພະສິດ — ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ — ເປັນຄະນະ
5. ທ່ານ ປອ. ອຳມະນີ ນໍລິນ — ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ — ເປັນຄະນະ
6. ທ່ານ ຜູ້ອຳນວຍການໂຮງຮຽນອ້ອມຂ້າງ ຂຶ້ນກັບພະແນກສຶກສາທິການ ແລະ ກິລາ — ເປັນຄະນະ
7. ທ່ານ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາ ເມືອງ 9 ເມືອງ — ເປັນຄະນະ
8. ທ່ານ ບຸນຕີ ສິດທິນິນທອງ ປະທານສະມາຄົມໂຮງຮຽນພາກເອກະຊົນ ນວ — ເປັນຄະນະ

➢ **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບຊີ້ນຳລວມ**

1) ຊີ້ນຳການຈັດຕັ້ງປະຕິບັດການສະເຫຼີມສະຫຼອງວັນຄູແຫ່ງຊາດ 7 ຕຸລາ ຄົບຮອບ 30 ປີ ໃຫ້ມີຂະບວນການຟົດຟື້ນ, ມີເນື້ອໃນຄົບຖ້ວນ ແລະ ຜົນສຳເລັດຈົບງາມ;
2) ແບ່ງຄວາມຮັບຜິດຊອບ ແລະ ມອບວຽກໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງ, ແຕ່ລະທ່ານທີ່ມີລາຍຊື່ໃນຂໍ້ຕົກລົງຢ່າງຈະແຈ້ງ ແລະ ຄົ້ນຄວ້າພິຈາລະນາງົບປະມານຮັບໃຊ້ໃຫ້ພຽງພໍ;
3) ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດໃຫ້ມີຜົນສຳເລັດຕາມແຜນການທີ່ວາງໄວ້;
4) ໃຫ້ຄຳປຶກສາ, ຄຳແນະນຳ ແລະ ແກ້ໄຂບັນຫາຂໍ້ຄົງຄ້າງໃຫ້ທັນກັບເວລາ.

**ມາດຕາ 2** ແຕ່ງຕັ້ງຄະນະຮັບຜິດຊອບກະກຽມດ້ານເນື້ອໃນ ແລະ ຮູບການຍ້ອງຍໍ

1. ທ່ານ ລຳພັນ ອຸ່ນມະໂນ ຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຫົວໜ້າ
2. ທ່ານ ທັດສະດີ ຈັນທະວົງ ຮອງຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຮອງ
3. ທ່ານ ສີສຸນທອນ ດໍາຣົງ ຮອງຫົວໜ້າຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ເປັນຄະນະ
4. ທ່ານ ນາງ ລັດສະນີ ສຸກສຳເລີງ ຮອງຫົວໜ້າຂະແໜງສະຖິຕິ, ແຜນການ ແລະ ຮ່ວມມືກັບຕ່າງປະເທດ ເປັນຄະນະ
5. ທ່ານ ນາງ ວອນ ສຸໄລພອນ ວິຊາການຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຄະນະ
6. ທ່ານ ຄຳລອຍ ບົວວົງ ວິຊາການຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຄະນະ
7. ທ່ານ ມະນີວັນ ອຸລາວົງ ວິຊາການຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ ເປັນຄະນະ
8. ທ່ານ ນາງ ບຸບຜາ ລີເຮືອງ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ
9. ທ່ານ ນາງ ສົມໝີ ເຮືອນແກ້ວມະນີ ວິຊາການຂະແໜງສາມັນສຶກສາ ເປັນຄະນະ

➢ **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບກະກຽມດ້ານເນື້ອໃນ ແລະ ຮູບການຍ້ອງຍໍ**

1) ກະກຽມເນື້ອໃນບົດລາຍງານຕ່າງໆໃຫ້ສອດຄ່ອງເໝາະສົມ, ກະກຽມຮູບແບບ ແລະ ວິທີການຍ້ອງຍໍ ເພື່ອໃຫ້ມີຜົນສຳເລັດອັນຈົບງາມ;
2) ແບ່ງຄວາມຮັບຜິດຊອບ ແລະ ມອບວຽກໃຫ້ແຕ່ລະທ່ານທີ່ມີລາຍຊື່ໃນຂໍ້ຕົກລົງຢ່າງຈະແຈ້ງ;
3) ຕິດຕາມ, ກວດກາການຈັດຕັ້ງປະຕິບັດແຕ່ລະວຽກ ໃຫ້ແຕ່ລະທ່ານເປັນໄລຍະ ພ້ອມທັງລາຍງານໃຫ້ຄະນະຊີ້ນຳລວມຊາບໃຫ້ທັນກັບເວລາ.

**ມາດຕາ 3** ແຕ່ງຕັ້ງຄະນະຮັບຜິດຊອບການຈັດວາງສະແດງຜົນງານ

1. ທ່ານ ຂັນໄຊ ແສງສຸບີ ຫົວໜ້າຂະແໜງສາມັນສຶກສາ ເປັນຫົວໜ້າ
2. ທ່ານ ໂພໂຄ ບົວລະວົງ ຮັກສາການຫົວໜ້າຂະແໜງບໍລິຫານ ແລະ ການເງິນ ເປັນຮອງ
3. ທ່ານ ນາງ ໄພເລາະ ສັງທອງ ຫົວໜ້າຂະແໜງການນຶກສາກ່ອນໄວຮຽນ ເປັນຮອງ
4. ທ່ານ ອານຸເດດ ພົມປິດາ ຮອງປະທານສະພາໂຮງຮຽນພາກເອກະຊົນ ນວ ເປັນຮອງ
5. ທ່ານ ນາງ ວຽງສີ ມະນີເພັດ ຮອງ ຜອ ໂຮງຮຽນ ມສ ມິດຕະພາບລາວ-ຫວຽດນາມ ເປັນຮອງ
6. ທ່ານ ແສງເພັດ ບຸດສະບາປະເສີດ ຮອງ ຜອ ໂຮງຮຽນ ມສ ວຽງຈັນ ເປັນຮອງ
7. ທ່ານ ອ້ອຍ ປັນຍາວົງ ເລຂາຫົວໜ້າພະແນກ ສກນວ ເປັນຄະນະ
8. ທ່ານ ທອງຂັນ ສີລິໂພຄຳ ຮອງຫົວໜ້າຂະແໜງການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ເປັນຄະນະ
9. ທ່ານ ກຸນ ຄຳຕັນ ຫົວໜ້າຂະແໜງອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ເປັນຄະນະ
10. ທ່ານ ນາງ ທອງໃບ ພັນໂນລາດ ຮອງຫົວໜ້າຂະແໜງພັດທະນາຄູ ເປັນຄະນະ
11. ທ່ານ ເກຍ ຢ່າງ ຫົວໜ້າສູນການສຶກສານອກໂຮງຮຽນ ເປັນຄະນະ
12. ທ່ານ ນາງ ອາດ ສີສຸນທອນ ວິຊາການຂະແໜງສາມັນ ເປັນຄະນະ
13. ທ່ານ ນາງ ສຸປານີ ດາລາລັດສະໝີ ວິຊາການຂະແໜງສຶກສາກ່ອນໄວຮຽນ ເປັນຄະນະ
14. ທ່ານ ນາງ ຈັນມາລີ ວົງດາລາ ວິຊາການຂະແໜງກວດກາ, ປະເມີນຜົນ ເປັນຄະນະ
15. ທ່ານ ສານສັກ ໄຊທິງເດດ ວິຊາການຂະແໜງສະຖິຕິແຜນການ ເປັນຄະນະ
16. ທ່ານ ແສງເພັດ ແກ້ວບຸນພັນ ວິຊາການຂະແໜງສະຖິຕິແຜນການ ເປນຄະນະ

17. ທ່ານ ພູວິອັກສອນ ວົງພູທອນ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ
18. ທ່ານ ສີອອນ ຄໍາເພັງ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ
19. ທ່ານ ນາງ ສຸກພິໄລ ໄຊຍະມົນຕີ ວິຊາການສູນການສຶກສານອກໂຮງຮຽນ ເປັນຄະນະ
20. ທ່ານ ນາງ ອານຸສອນ ວົງໄຊ ວິຊາການສູນການສຶກສານອກໂຮງຮຽນ ເປັນຄະນະ
21. ທ່ານ ນາງ ເພັດສະໝອນ ໄຊທິກຸນ ວິຊາການສູນການສຶກສານອກໂຮງຮຽນ ເປັນຄະນະ
22. ບັນດາທ່ານໃນ 3 ອົງການຈັດຕັ້ງມະຫາຊົນ ເປັນຄະນະ

➢ **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບການຈັດວາງສະແດງຜົນງານ**

1) ວາງແຜນຂັ້ນຕອນຈັດຕັ້ງປະຕິບັດ, ສັງລວມເອົາເນື້ອໃນ ແລະ ຮູບພາບຂອງວຽກງານຕ່າງໆທີ່ກ່ຽວຂ້ອງທີ່ຈະນໍາມາວາງສະແດງ ນໍາແຕ່ລະຂະແໜງພາຍໃນພະແນກ, ໂຮງຮຽນ ແລະ ສູນ;
2) ແບ່ງຄວາມຮັບຜິດຊອບ ແລະ ມອບວຽກໃຫ້ແຕ່ລະພາກສ່ວນ, ແຕ່ລະທ່ານ ທີ່ມີລາຍຊື່ໃນຂໍ້ຕົກລົງຢ່າງຈະແຈ້ງ;
3) ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຕ່ລະວຽກທີ່ໄດ້ມອບໝາຍໃຫ້ ແຕ່ລະທ່ານເປັນແຕ່ລະໄລຍະ ແລະ ລາຍງານໃຫ້ຄະນະຊີ້ນໍາລວມຮັບຊາບ ແລະ ມີທິດຊີ້ນໍາໃນການປະຕິບັດໃຫ້ທັນເວລາ.

**ມາດຕາ 4 ແຕ່ງຕັ້ງຄະນະຈັດຕັ້ງພິທີ ແລະ ຮັບແຂກ**

**ຄະນະຈັດຕັ້ງພິທີ**

1. ທ່ານ ບຸນທັນ ແສງມະນີ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຫົວໜ້າ
2. ທ່ານ ທັດສະດີ ຈັນທະວົງ ຮອງຫົວໜ້າຂະແໜງຈັດຕັ້ງ ແລະ ພະນັກງານ ເປັນຮອງ
3. ທ່ານ ບຸນນໍາ ສີສຸທໍາມະວົງ ຮອງຫົວໜ້າຂະແໜງສາມັນສຶກສາ ເປັນຮອງ
4. ທ່ານ ສີສຸວັນ ໄຊຍະວົງພົມມະບຸດ ຮອງຫົວໜ້າສູນໄອຊີທີພະແນກ ສກນວ ເປັນຄະນະ
5. ທ່ານ ນາງ ສົມໝີ ເຮືອນແກ້ວມະນີ ວິຊາການຂະແໜງສາມັນສຶກສາ ເປັນຄະນະ
6. ທ່ານ ນາງ ເພັດຈັນດາວອນ ລິນອຸໄທ ວິຊາການສູນໄອຊີທີພະແນກສຶກສາ ນວ ເປັນຄະນະ
7. ທ່ານ ສີອອນ ຄໍາເພັງ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ
8. ທ່ານ ບຸນເຫຼືອ ໂສລັດຕະນະວົງ ວິຊາການຂະແໜງບໍລິຫານ ແລະ ການເງິນ ເປັນຄະນະ

**ຄະນະຮັບຜິດຊອບຮັບແຂກ**

1. ທ່ານ ນາງ ລີປ່າເອ້ຍ ບົວປາວ ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ເປັນຫົວໜ້າ
2. ທ່ານຫົວໜ້າຂະແໜງ, ຫົວໜ້າສູນ ແລະ ບັນດາທ່ານຜູ້ອໍານວຍການໂຮງຮຽນອ້ອມຂ້າງຂຶ້ນກັບພະແນກສຶກສາທິການ ແລະ ກິລາ ເປັນຮອງ
3. ທ່ານຮອງຫົວໜ້າຂະແໜງ, ຮອງຫົວໜ້າສູນ ແລະ ບັນດາທ່ານຮອງຜູ້ອໍານວຍການໂຮງຮຽນອອ້ມຂ້າງທີ່ຂຶ້ນກັບພະແນກສຶກສາທິການ ແລະ ກິລາ ເປັນຄະນະ

➢ **ສິດ ແລະ ໜ້າທີ່ຂອງຄະນະຈັດຕັ້ງພິທີ ແລະ ຮັບແຂກ**

1) ວາງແຜນດ້ານພິທີການ, ກໍານົດແຂກທີ່ຈະເຊີນ ແລະ ອອກບັດເຊີນໃຫ້ແຂກທີ່ເຂົ້າຮ່ວມ, ກະກຽມຕ້ອນຮັບ ແລະ ຕິດຕາມແຂກທີ່ມາເຂົ້າຮ່ວມຕາມການເຊີນ;
2) ແບ່ງຄວາມຮັບຜິດຊອບ ແລະ ມອບວຽກໃຫ້ແຕ່ລະທ່ານທີ່ມີລາຍຊື່ໃນຂໍ້ຕົກລົງຢ່າງຈະແຈ້ງ;
3) ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແຕ່ລະວຽກທີ່ໄດ້ມອບໝາຍໃຫ້ແຕ່ລະທ່ານເປັນໄລຍະ ແລະ ລາຍງານໃຫ້ຄະນະຊີ້ນໍາລວມຮັບຊາບ ແລະ ມີທິດຊີ້ນໍາໃຫ້ທັນເວລາ.

**ມາດຕາ 5** ແຕ່ງຕັ້ງຄະນະຮັບຜິດຊອບດ້ານເສດຖະກິດ

| | | | |
|---|---|---|---|
| 1. | ທ່ານ ນາງ ລີປ່າເອ້ຍ ບົວປາວ | ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ | ເປັນຫົວໜ້າ |
| 2. | ທ່ານ ອານຸເດດ ພົມປິດາ | ຮອງປະທານສະພາໂຮງຮຽນພາກເອກະຊົນ ນວ | ເປັນຮອງ |
| 3. | ທ່ານ ນາງ ໄພເລາະ ສັງທອງ | ຫົວໜ້າຂະແໜງສຶກສາກ່ອນໄວຮຽນ | ເປັນຮອງ |
| 4. | ທ່ານ ສົມນຶກ ພົມມະສາດ | ຮອງຫົວໜ້າຂະແໜງບໍລິຫານ ແລະ ການເງິນ | ເປັນຮອງ |
| 5. | ທ່ານ ບຸນນຳ ສີສຸທຳມະວົງ | ຮອງຫົວໜ້າຂະແໜງສາມັນສຶກສາ | ເປັນຄະນະ |
| 6. | ທ່ານ ຖານະ ແກ້ວແສງທິບ | ຮອງຫົວໜ້າຂະແໜງ ສນຮ ແລະ ຝຶກອົບຮົມວິຊາຊີບ | ເປັນຄະນະ |
| 7. | ທ່ານ ວາດສະໜາ ອິນສີສຸພັນ | ວິຊາການຂະແໜງສຶກສາກ່ອນໄວຮຽນ | ເປັນຄະນະ |
| 8. | ທ່ານ ສີສູນທອນ ດຳຣົງ | ຮອງຫົວໜ້າຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ | ເປັນຄະນະ |
| 9. | ທ່ານ ນາງ ສຸກສາຄອນ ພັນໂນລາດ | ວິຊາການຂະແໜງບໍລິຫານ ແລະ ການເງິນ | ເປັນຄະນະ |
| 10. | ທ່ານ ນາງ ເພັດສະໄໝ ທຳມະວົງ | ວິຊາການຂະແໜງບໍລິຫານ ແລະ ການເງິນ | ເປັນຄະນະ |

➢ **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບດ້ານເສດຖະກິດ**

1) ຂຶ້ນແຜນງົບປະມານໃຊ້ຈ່າຍທັງໝົດໃຫ້ລະອຽດ, ສັງລວມການປະກອບສ່ວນຈາກພາກສ່ວນຕ່າງໆ;
2) ແບ່ງຄວາມຮັບຜິດຊອບ ແລະ ມອບວຽກໃຫ້ແຕ່ລະທ່ານທີ່ມີລາຍຊື່ໃນຂໍ້ຕົກລົງຢ່າງຈະແຈ້ງ;
3) ຕິດຕາມ, ກວດກາ, ສະຫຼຸບລາຍງານ ຄະນະຊີ້ນຳລວມຮັບຊາບ ແລະ ມີທິດຊີ້ນຳໃຫ້ທັນເວລາ.

**ມາດຕາ 6** ງົບປະມານຮັບໃຊ້ໃນພິທີສະເຫຼີມສະຫຼອງວັນຄູແຫ່ງຊາດ ວັນທີ 7 ຕຸລາ

- ນຳໃຊ້ງົບປະມານລັດຂອງພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງວຽງຈັນ ຕາມການຈັດສັນງົບປະມານ ປະຈຳປີ 2024 ເຂົ້າໃນວຽກງານດັ່ງກ່າວຕາມຄວາມເໝາະສົມ;
- ລະດົມທຶນຈຳນວນໜຶ່ງຈາກຫົວໜ່ວຍທຸລະກິດຂອງຂະແໜງການສຶກສາ ແລະ ກິລາ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງຕາມຄວາມເໝາະສົມ ເພື່ອມາຮັບໃຊ້ວຽກງານດັ່ງກ່າວໃຫ້ສຳເລັດ.

**ມາດຕາ 7** ບັນດາທ່ານທີ່ຖືກແຕ່ງຕັ້ງໃນມາດຕາ 1 ຮອດມາດຕາ 5 ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມຄວາມຮັບຜິດຊອບຂອງໃຜລາວຢ່າງເຂັ້ມງວດ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ.

**ມາດຕາ 8** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າພະແນກ**

ພະແນກ ສຶກສາທິການ ແລະ ກິລາ
ນະຄອນຫຼວງວຽງຈັນ

**ສົມພອນ ສອນດາລາ**